ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ **2721** /ຜ-ຟຟລ
ນະຄອນຫຼວງວຽງຈັນ, ວັນທີ **22/08/2025**

ໃບລາຍງານ

ຮຽນ: **ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ**
ທ່ານ ຜູ້ອຳນວຍການໃຫຍ່ ບໍລິສັດ ຕະຫຼາດຫຼັກຊັບລາວ ຈຳກັດ ທີ່ນັບຖື

ເລື່ອງ: **ແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສະພາບໍລິຫານສະໄໝສາມັນ ຄັ້ງທີ 03/2025**

- ອີງຕາມ ຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ (ສະບັບປັບປຸງ) ສະບັບເລກທີ 15/ຄຄຊ, ລົງວັນທີ 11 ທັນວາ 2024.
- ອີງຕາມ ລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ("ບໍລິສັດ") ຂໍຖືເປັນກຽດແຈ້ງມະຕິທີ່ສຳຄັນ ຂອງກອງປະຊຸມສະພາ ບໍລິຫານສະໄໝສາມັນ ຄັ້ງທີ 03/2025, ວັນທີ 22 ສິງຫາ 2025, ມີລາຍລະອຽດລຸ່ມນີ້:

1. ອະນຸມັດບົດລາຍງານຜົນການດຳເນີນທຸລະກິດ ລວມທັງລາຍງານການເງິນ ຂອງບໍລິສັດ ປະຈຳ 06 ເດືອນ ຕົ້ນປີ 2025 ແລະ ໃຫ້ນຳເລື່ອງນີ້ລາຍງານຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນ ເພື່ອພິຈາລະນາອະນຸມັດ.
2. ອະນຸມັດບໍ່ຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດຂອງບໍລິສັດ ປະຈຳ 06 ເດືອນຕົ້ນປີ 2025. ເນື່ອງ ຈາກບໍລິສັດຍັງມີພັນທະໃນການຊຳລະຮຸ້ນກູ້ ແລະ ເງິນກູ້ ທີ່ຈະຄົບກຳນົດໃນໄຕມາດ 03 ແລະ ໄຕມາດ 04 ປີ 2025. ພ້ອມກັນນັ້ນ, ກອງປະຊຸມ ເຫັນດີຈ່າຍເງິນປັນຜົນ ປີລະຄັ້ງ, ຖ້າກໍລະນີ ບໍລິສັດ ມີຜົນກຳໄລ ຈາກການດຳເນີນທຸລະກິດ ແລະ ໃຫ້ນຳເລື່ອງດັ່ງກ່າວລາຍງານຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນ ເພື່ອພິຈາລະນາ ອະນຸມັດ.

ດັ່ງນັ້ນ ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະໃຊ້ຕາງລາຍງານ.

ຮຽນມາດ້ວຍຄວາມນັບຖື,
ປະທານສະພາບໍລິຫານ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ສຸລິວັດ ສຸວັນນະຈຸມຄຳ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ. ນ. 2392
ໂທລະສັບ: (856-21) 316 142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la